ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ເອກະພາບ ສັງຄົມນິຍົມ

-+-+-

<u>ສະພາລັດຖະມົນຕີ:</u>  ເລກທີ 25 /ປສລ

## <u>ດຳ ລັດ</u>

ຂອງປະທານສະພາລັດຖະມົນຕີ ກ່ຽວກັບ
ການຮັບຮອງ ແລະປະກາດໃຊ້ກົດລະບຽບ
ຂອງສະມາຄົມນັກຫນັງສືພິມລາວ.

-+-+-+-

- ອີງໃສ່ມະຕິຂອງກອງປະຊຸມໃຫຍ່ຄັ້ງທີ III ຂອງພັກປະຊາຊົນປະຕິວັດລາວ.
- ອີງໃສ່ສະພາບການຕົວຈິງ ແລະຄວາມຮຽກຮ້ອງຕ້ອງການຂອງວຽກງານຫນັງສືພິມ.
- ອີງໃສ່ຄຳສະເຫນີຂອງທ່ານຜູ້ວ່າການປະທານຄະນະກຳມະການ ຂ່າວສານ ຫນັງສືພິມ ວິທະຍຸກະຈາຍສຽງ ແລະ ໂທລະພາບແຫ່ງລັດ.

ປະທານສະພາລັດຖະມົນຕີອອກດຳລັດ:

<u>ມາດຕາ 1:</u> ຮັບຮອງ ແລະປະກາດໃຊ້ກົດລະບຽບຂອງສະມາຄົມນັກຫນັງສືພິມລາວ ເຊິ່ງຕິດຄັດມາພ້ອມນີ້ ຢ່າງເປັນທາງການ.

<u>ມາດຕາ 2:</u> ບັນດາທ່ານລັດຖະມົນຕີ ປະທານຄະນະກຳມະການແຫ່ງລັດ, ອົງການທຽບເທົ່າກະຊວງ, ເ ທານຄະນະກຳມະການປົກຄອງແຂວງຂອງທຸກແຂວງ ແລະກຳແພງນະຄອນວຽງຈັນ ຕ້ອງ ບັດຕາມດຳລັດສະບັບນີ້ຢ່າງເຂັ້ມງວດ.

<u>ມາດຕາ 3:</u> ມອບໃຫ້ທ່ານຫົວຫນ້າຄະນະໂຄສະນາອົບຮົມສູນກາງເປັນຜູ້ນຳອອກຈັດຕັ້ງປະຕິບັດຕາມດຳລັດ ສະບັບນີ້ໃຫ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ວຽງຈັນ, ວັນທີ 8 ມີນາ 1985

ເຊັນແທນປະທານສະພາລັດຖະມົນຕີ
ຮອງປະທານສະພາລັດຖະມົນຕີຜູ້ທີຫນຶ່ງ.

ໜູຮັກ ພູມສະຫວັນ